ກະຊວງສາທາລະນະສຸກ

# ມາດຕະຖານການປະຕິບັດ ຂອງທັນຕະແພດທົ່ວໄປ

ສິງຫາ 2019

ສະພາຄຸ້ມຄອງວິຊາຊີບປິ່ນປົວ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບປິ່ນປົວ

ເລກທີ 0146 /ສວປ

ນະຄອນຫຼວງວຽງຈັນ, ວັນທີ 02 AUG 2019

# ຂໍ້ຕົກລົງ
## ວ່າດ້ວຍການຮັບຮອງເອົາມາດຕະຖານການປະຕິບັດງານຂອງທັນຕະແພດທົ່ວໄປ

- ອີງຕາມ ຍຸດທະສາດວ່າດ້ວຍລະບົບການອອກໃບອະນຸຍາດປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ ຂອງ ສປປ ລາວ ແຕ່ປີ 2016-2025 ສະບັບເລກທີ 2098/ສທ, ລົງວັນທີ 03 ທັນວາ 2015;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສາທາລະນະສຸກ ວ່າດ້ວຍສະພາຄຸ້ມຄອງວິຊາຊີບປິ່ນປົວ ສະບັບເລກທີ 0131/ສທ, ລົງວັນທີ 19 ມັງກອນ 2017;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງຄະນະກຳມະການວິຊາຊີບປິ່ນປົວ(ບອດ)ດ້ານທັນຕະກຳ.

**ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ ຕົກລົງ:**

**ມາດຕາ 1.** ເຫັນດີຮັບຮອງເອົາ ມາດຕະຖານການປະຕິບັດງານຂອງທັນຕະແພດທົ່ວໄປ.

**ມາດຕາ 2.** ມອບໃຫ້ຫ້ອງການຄຸ້ມຄອງວິຊາຊີບປິ່ນປົວ, ຄະນະກຳມະການວິຊາຊີບປິ່ນປົວ(ບອດ)ດ້ານທັນຕະກຳ ເປັນໃຈກາງ ສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດການເຜີຍແຜ່, ການຝຶກອົບຮົມ ມາດຕະຖານການປະຕິບັດງານຂອງທັນຕະແພດທົ່ວໄປສະບັບນີ້ ພ້ອມທັງຊຸກຍູ້ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດມາດຕະຖານການປະຕິບັດງານຂອງທັນຕະແພດທົ່ວໄປ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 3.** ໃຫ້ຫ້ອງການກະຊວງສາທາລະນະສຸກ, ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ, ກົມຈັດຕັ້ງ ແລະ ພະນັກງານ, ກົມການສຶກສາສາທາລະນະສຸກ, ບັນດາຄະນະກຳມະການວິຊາຊີບປິ່ນປົວ(ບອດ) ຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ, ມະຫາວິທະຍາໄລວິທະຍາສາດສຸຂະພາບ, ໂຮງໝໍ, ສູນ, ສະຖາບັນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງພ້ອມກັນປະຕິບັດຂໍ້ຕົກລົງສະບັບນີ້ ຕາມໜ້າທີ່ຂອງໃຜລາວ.

**ມາດຕາ 4.** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນຳໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ**

<u>ບ່ອນນຳສົ່ງ:</u>

| | |
|---|---|
| 1. ປະທານ ແລະ ຮອງປະທານ ສວປ ທ່ານລະ | 01 ສະບັບ |
| 2. ຄະນະກຳມະການວິຊາຊີບປິ່ນປົວດ້ານທັນຕະກຳ ທ່ານລະ | 01 ສະບັບ |
| 3. ຫ້ອງການຄຸ້ມຄອງວິຊາຊີບປິ່ນປົວ | 01 ສະບັບ |
| 4. ຫ້ອງການກະຊວງ, ກົມກອງທີ່ກ່ຽວຂ້ອງ ບ່ອນລະ | 01 ສະບັບ |
| 5. ມວສ, ໂຮງໝໍ, ສູນ ບ່ອນລະ | 01 ສະບັບ |
| 6. ສຳເນົາໄວ້ | 02 ສະບັບ |

ກະຊວງສາທາລະນະສຸກ
ສະພາຄຸ້ມຄອງວິຊາຊີບປິ່ນປົວ

ດຣ ບ່ອນເພັກ ດາລາລອຍ

# ສາລະບານ


ໜ້າ

ຄຳນຳ:........................................................................................................................1

ການບໍລິການປິ່ນປົວໂດຍເອົາຄົນເຈັບເປັນໃຈກາງ:..................................................................2

ຄຸນນະພາບຂອງການບໍລິການປິ່ນປົວ:...................................................................................2

ຂອບເຂດການປະຕິບັດງານຂອງທັນຕະແພດ:.........................................................................4

ຈັນຍາທຳ, ສັດຊື່ບໍລິສຸດ ແລະ ຄວາມເປັນມືອາຊີບ:...............................................................4

ຄ່າໃຊ້ຈ່າຍ(ຄ່າທຳນຽມ, ຄ່າປິ່ນປົວ, ຄ່າບໍລິການ):...............................................................8

ການໂຄສະນາເພື່ອສົ່ງເສີມການບໍລິການ:.................................................................................9

ການສົ່ງຕໍ່ຄົນເຈັບເພື່ອການປຶກສາຫາລື ແລະ ນຳສົ່ງເພື່ອການປິ່ນປົວ:.......................................9

ການມອບວຽກງານ:.......................................................................................................10

ການກວດກາຈາກພາຍໃນ ແລະ ພາຍນອກ ເພື່ອພັດທະນາຄຸນນະພາບຂອງການປິ່ນປົວ:...............................10

ຂະບວນການກວດກັ່ນຕອງສຸຂະພາບ, ການຄຸ້ມຄອງຜູ້ປະຕິບັດງານ ແລະ ສະຖານທີ່ປະຕິບັດງານທາງທັນຕະກຳ:....11

# ມາດຕະຖານການປະຕິບັດງານຂອງທັນຕະແພດທົ່ວໄປ
# (Standard of Practice of General Dentist)

## ຄຳນຳ

ມາດຕະຖານການປະຕິບັດງານຂອງທັນຕະແພດທົ່ວໄປ ແມ່ນໄດ້ພົນລະນາເຖິງຄວາມຄາດຫວັງຂອງສາທາລະນະຊົນ ທີ່ຢາກໃຫ້ທັນຕະແພດທຸກຄົນ ທີ່ໄດ້ຂຶ້ນທະບຽນເປັນຜູ້ປະກອບວິຊາຊີບປິ່ນປົວ ນຳຄະນະບໍລິຫານງານວິຊາຊີບປິ່ນປົວສະເພາະທັນຕະແພດ/ສະພາຄຸ້ມຄອງວິຊາຊີບປິ່ນປົວໄປແລ້ວນັ້ນ ຕ້ອງໄດ້ເອົາໃຈໃສ່ປະຕິບັດ.

ມາດຕະຖານດັ່ງກ່າວນີ້ຍັງແນໃສ່ເພື່ອໃຫ້ບັນດາທັນຕະແພດ ຮູ້ເຖິງຄວາມຄາດຫວັງຂອງສາທາລະນະຊົນຈາກທັນຕະແພດອີກດ້ວຍ.

ທັນຕະແພດ ໝາຍເຖິງທັນຕະແພດທົ່ວໄປ ແລະ ທັນຕະແພດຊ່ຽວຊານສາຂາໃດໜຶ່ງ ທີ່ປະກອບວິຊາຊີບປິ່ນປົວທາງດ້ານທັນຕະກຳ.

ມາດຕະຖານສະບັບນີ້ໄດ້ໃຫ້ລາຍລະອຽດ ກ່ຽວກັບຫຼັກການ ແລະ ຄຸນນະທຳ ທີ່ຈະໄດ້ເອົາມາເປັນບ່ອນອີງໃນການປະຕິບັດທີ່ດີທາງດ້ານການແພດ ແລະ ທາງທັນຕະກຳ. ມາດຕະຖານດັ່ງກ່າວນີ້, ໄດ້ຖືກຮ່າງຂຶ້ນໂດຍຄະນະນັກວິຊາການດ້ານທັນຕະກຳ ຂອງຄະນະບໍລິຫານງານວິຊາຊີບປິ່ນປົວສະເພາະທັນຕະແພດ ສະພາຄຸ້ມຄອງວິຊາຊີບປິ່ນປົວກະຊວງສາທາລະນະສຸກ, ຊຶ່ງໄດ້ພ້ອມກັນສຶກສາຕາມແຫຼ່ງຂໍ້ມູນ ທີ່ທາງອົງການອະນາໄມໂລກ ແລະ ທະນາຄານພັດທະນາອາຊີ (World Health Organization WHO/Asian Development Bank ADB) ເລືອກເຟັ້ນມາ, ໂດຍອີງຕາມມາດຕະຖານການປະຕິບັດງານຂອງທັນຕະແພດ ໃນບັນດາປະເທດທີ່ເປັນສະມາຊິກປະຊາຄົມເສດຖະກິດອາຊຽນ (Asean Economic Community/AEC) ແລະ ໄດ້ອີງຕາມມາດຕະຖານການປະຕິບັດງານ ຂອງທັນຕະແພດໃນບັນດາປະເທດທີ່ມີຄວາມກ້າວໜ້າທັນສະໄໝດ້ານທັນຕະກຳໃນໂລກ, ຈາກນັ້ນ ໄດ້ເອົາໄປນຳສະເໜີຢ່າງກ້ວາງຂວາງຕໍ່ບັນດານັກວິຊາການໃນວົງການແພດ ແລະ ວົງການທັນຕະກຳ ເພື່ອປຶກສາຫາລື ແລະ ເບິ່ງຄວາມແທດເໝາະກັບສະພາບຄວາມເປັນຈິງຂອງປະເທດ, ເບິ່ງຄວາມຄົບຖ້ວນ ສົມບູນ ແລະ ອື່ນໆ.

ການຮັບຮູ້ ແລະ ປະຕິບັດຕາມມາດຕະຖານດັ່ງກ່າວ ແມ່ນໜ້າທີ່ ແລະ ຄວາມຮັບຜິດຊອບຂອງທັນຕະແພດທຸກຄົນ ທີ່ໄດ້ຂຶ້ນທະບຽນແລ້ວນັ້ນຕ້ອງໄດ້ເອົາໃຈໃສ່ປະຕິບັດຢ່າງເຄັ່ງຄັດ. ການບໍ່ປະຕິບັດໄປຕາມມາດຕະຖານນີ້ ຫລື ປະຕິບັດແຕ່ບໍ່ເປັນປະຈຳ ຫລື ບໍ່ຕໍ່ເນື່ອງສາມາດມີຜົນສະທ້ອນ ຕໍ່ການ ຂຶ້ນທະບຽນວິຊາຊີບປິ່ນປົວ ແລະ ການໄດ້ຮັບໃບອະນຸຍາດປະກອບວິຊາຊີບປິ່ນປົວ ອີກດ້ວຍ.

ໃນມາດຕະຖານສະບັບນີ້, ຄຳວ່າ **"ຕ້ອງ"** ແມ່ນໝາຍເຖິງ ມີການກ່ຽວພັນທີ່ສຳຄັນທາງດ້ານກົດໝາຍ ຫລື ມີຄວາມຮຽກຮ້ອງອັນຈຳເປັນໃນການປະຕິບັດ, ຄຳວ່າ **"ຄວນ"** ໝາຍຄວາມວ່າ ທັນຕະແພດຈະໄດ້ປະຕິບັດ ດ້ວຍວິຈາລະນະຍານ ເພາະວ່າບາງຫຼັກການກໍບໍ່ອາດນຳໃຊ້ໄດ້ໃນທຸກສະພາບການ ຫລື ທຸກສະຖານະການ.

**ມາດຕະຖານການປະຕິບັດງານຂອງທັນຕະແພດສະບັບນີ້ປະກອບດ້ວຍ:**

– ການບໍລິການປິ່ນປົວໂດຍເອົາຄົນເຈັບເປັນໃຈກາງ;

– ຄຸນນະພາບຂອງການບໍລິການປິ່ນປົວ;

– ຂອບເຂດການປະຕິບັດງານຂອງທັນຕະແພດ;

- ຈັນຍາທຳ, ສັດຊື່ບໍລິສຸດ ແລະ ຄວາມເປັນມືອາຊີບ;
- ການພົວພັນກັບຄົນເຈັບ;
- ຄ່າໃຊ້ຈ່າຍ (ຄ່າທຳນຽມ, ຄ່າປິ່ນປົວ, ຄ່າບໍລິການ);
- ການໂຄສະນາເພື່ອສົ່ງເສີມການບໍລິການ;
- ການສົ່ງຕໍ່ຄົນເຈັບເພື່ອການປຶກສາຫາລື ແລະ ນຳສົ່ງເພື່ອການປິ່ນປົວ;
- ການມອບວຽກງານ;
- ການກວດກາຈາກພາຍໃນ ແລະ ພາຍນອກ ເພື່ອພັດທະນາຄຸນນະພາບຂອງການປິ່ນປົວ;
- ຂະບວນການກວດກັ່ນຕອງສຸຂະພາບ, ຂະບວນການຄຸ້ມຄອງຜູ້ປະຕິບັດງານ ແລະ ສະຖານທີ່ປະຕິບັດງານທາງທັນຕະກຳ.

## I. ການບໍລິການປິ່ນປົວໂດຍເອົາຄົນເຈັບເປັນໃຈກາງ

ທັນຕະແພດທຸກຄົນຕ້ອງ:

1. ຕິດຕໍ່ສື່ສານກັບຄົນເຈັບໄດ້ຢ່າງຈະແຈ້ງ;
2. ສະໜອງຂໍ້ມູນອັນຈະແຈ້ງໃຫ້ຄົນເຈັບ ກ່ຽວກັບທາງເລືອກ ຫລື ຮູບແບບວິທີການປິ່ນປົວ, ຜົນທີ່ໄດ້ຮັບ ແລະ ມູນຄ່າໃນການໃຊ້ຈ່າຍ;
3. ປິ່ນປົວຄົນເຈັບດ້ວຍຄວາມເຄົາລົບສິດ ແລະ ໃຫ້ຄວາມນັບຖືຕະຫລອດເວລາ ໂດຍປາສະຈາກອະຄະຕິ;
4. ຖືເອົາຄົນເຈັບເປັນໃຈກາງໃນການບໍລິການປິ່ນປົວ, ເຂົ້າໃຈຄົນເຈັບ ແລະ ດ້ວຍຄວາມຍິນຍອມຈາກຄົນເຈັບກ່ອນການປິ່ນປົວ.

## II. ຄຸນນະພາບຂອງການບໍລິການປິ່ນປົວ

### 1. ດ້ານການປິ່ນປົວ

ທັນຕະແພດທຸກຄົນຕ້ອງ:

1) ໃຫ້ການບໍລິການທີ່ດີ ດ້ວຍການປິ່ນປົວທີ່ປອດໄພ, ມີມາດຕະຖານດ້ານວິຊາຊີບ ໂດຍມີຂໍ້ມູນອ້າງອີງ;
2) ເຂົ້າໃຈ, ນຳໃຊ້ຫຼັກການຈັນຍາບັນ ແລະ ມີຄວາມຮັບຜິດຊອບຕໍ່ວິຊາຊີບຢູ່ສະເໝີ;
3) ຮັບປະກັນວ່າ ສິ່ງທີ່ຕົນກະທຳລົງໄປນັ້ນຍັງຄົງຮັກສາໄວ້ຊຶ່ງຄວາມເຊື່ອ/ເຊື່ອຖື ຂອງຄົນເຈັບ ແລະ ສັງຄົມຕໍ່ວິຊາຊີບທັນຕະກຳ;
4) ສື່ສານຢ່າງຈະແຈ້ງ ແລະ ເຮັດວຽກຢ່າງມີປະສິດທິຜົນແບບເປັນມິດກັບເພື່ອນຮ່ວມງານ ເພື່ອຜົນປະໂຫຍດຂອງຄົນເຈັບ;
5) ເຂົ້າໃຈໃນຫຼັກການວິທະຍາສາດ ແລະ ນຳໃຊ້ຄວາມຮູ້ທາງຊີວະສາດ, ຊີວະການແພດ, ພຶດຕິກຳ, ວິທີການເຕັກນິກ ແລະ ວິທະຍາສາດທາງດ້ານຄລີນິກໃນການຄຸ້ມຄອງປິ່ນປົວຄົນເຈັບ;
6) ຮູ້ປິ່ນປົວ, ປ້ອງກັນ ແລະ ວາງແຜນປິ່ນປົວຄົນເຈັບໄດ້ຕາມກໍລະນີ;
7) ເຮັດວຽກພາຍໃຕ້ຄວາມຮູ້, ທັກສະ, ຄວາມສາມາດ ແລະ ຂີດຄວາມສາມາດ;
8) ປິ່ນປົວໂດຍນຳໃຊ້ທັກສະ, ປະສົບການຂອງຕົນ ແລະ ສົ່ງຕໍ່ຄົນເຈັບໄດ້ຢ່າງເໝາະສົມ ຖືກຕ້ອງ ແລະ ປອດໄພ.

ລາຍການຂອງການບໍລິການປິ່ນປົວລະອຽດດັ່ງນີ້:

- ປະເມີນຄົນເຈັບ ແລະ ເຂົ້າໃຈປະຫວັດພະຍາດຂອງຄົນເຈັບ ຊຶ່ງກວມເອົາທັງປັດໃຈທີ່ກ່ຽວຂ້ອງທາງດ້ານຈິດຕະສາດ, ວັດທະນະທຳ ແລະ ສັງຄົມ;
- ກວດຄົນເຈັບຢ່າງລະອຽດຖີ່ຖ້ວນ ໂດຍລົງເລິກຕໍ່ບັນຫາທີ່ຄົນເຈັບມີຢູ່;
- ໃຫ້ການອະທິບາຍ ແລະ ສັ່ງກວດເພີ່ມ ໃນສິ່ງທີ່ກ່ຽວຂ້ອງກັບບັນຫາຂອງຄົນເຈັບທີ່ມີຢູ່;
- ເລືອກເອົາວິທີການປິ່ນປົວ ທີ່ເໝາະສົມ;
- ເຄົາລົບສິດໃນການຕັດສິນໃຈຂອງຄົນເຈັບ ແລະ ປຶກສາຫາລືກັບທັນຕະແພດຜູ້ອື່ນ ເມື່ອມີຄວາມຈຳເປັນ;
- ອຳນວຍຄວາມສະດວກທຸກຢ່າງ ໃຫ້ແກ່ຄົນເຈັບໃນການປິ່ນປົວ.

2. ດ້ານຄຸນນະພາບຂອງທັນຕະແພດ:

ທັນຕະແພດທຸກຄົນທີ່ຢູ່ໃນສະຖານທີ່ປິ່ນປົວ ຕ້ອງເປັນຜູ້ທີ່ມີຄຸນນະພາບ, ໄດ້ລົງທະບຽນ ແລະ ມີໃບອະນຸຍາດປະກອບວິຊາຊີບປິ່ນປົວ:

1) ຖືກຮັບຮູ້, ໄດ້ຮັບການສອບເສັງຜ່ານ ແລະ ມີໃບອະນຸຍາດປະກອບວິຊາຊີບປິ່ນປົວ ຕາມລະບຽບຫຼັກການຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ກະຊວງສາທາລະນະສຸກ ວາງອອກ;
2) ຮັບຊາບ ແລະ ຍິນຍອມປະຕິບັດຕາມລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງກັບການບໍລິການປິ່ນປົວສຸຂະພາບປາກ ແລະ ແຂ້ວ ຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ກະຊວງສາທາລະນະສຸກ;
3) ໃຫ້ການຮ່ວມມື, ສະໜອງຂໍ້ມູນທີ່ຄົບຖ້ວນ, ຖືກຕ້ອງຕາມທາງການ.

3. ດ້ານການຮັກສາ ແລະ ພັດທະນາຄວາມເປັນມືອາຊີບ:

ທັນຕະແພດຕ້ອງໄດ້:

1) ພັດທະນາ ແລະ ຮັກສາໄວ້ຊຶ່ງຄວາມຮູ້, ທັກສະ ແລະ ການປະຕິບັດດ້ານຄລີນິກຂອງຕົນຢ່າງຕໍ່ເນື່ອງ;
2) ເນື່ອງຈາກວ່າ ວິຊາການດ້ານການແພດ, ວິຊາການດ້ານທັນຕະກຳ ແລະ ເຕັກໂນໂລຊີ ໄດ້ມີການວິວັດທະນາການໄປເລື້ອຍໆ, ເພື່ອຢາກຮັກສາໄວ້ຊຶ່ງຄວາມຊຳນານງານ ແລະ ເຮັດໃຫ້ຕົນທັນກັບສະພາບການ, ທັນຕະແພດຄວນຕັ້ງໜ້າປະຕິບັດດັ່ງນີ້:
   - ປະຕິບັດຕາມຂໍ້ກຳນົດ ຂອງຄະນະບໍລິຫານງານວິຊາຊີບປິ່ນປົວສະເພາະທັນຕະແພດ ສະພາຄຸ້ມຄອງວິຊາຊີບປິ່ນປົວ;
   - ເຂົ້າຮ່ວມການສຶກສາດ້ານການແພດແບບຕໍ່ເນື່ອງ (Continuing Medical Education/CME) ແລະ ການພັດທະນາວິຊາຊີບແບບຕໍ່ເນື່ອງ (Continuing Professional Development/CPD) ພ້ອມບັນທຶກຫົວຂໍ້ ແລະ ຊົ່ວໂມງ ຂອງການໄດ້ເຂົ້າຮ່ວມອົບຮົມ ຮໍ່າຮຽນຕ່າງໆ ເພື່ອເອົາເປັນຂໍ້ມູນ ຫລື ຫຼັກຖານໄວ້ນຳສະເໜີຕໍ່ສະພາຄຸ້ມຄອງວິຊາຊີບປິ່ນປົວ ໃນການຕໍ່ອາຍຸໃບອະນຸຍາດປະກອບວິຊາຊີບປິ່ນປົວ ເມື່ອມີຄວາມຕ້ອງການ;
   - ເຂົ້າຮ່ວມການພັດທະນາວິຊາຊີບທີ່ກ່ຽວຂ້ອງ ພ້ອມທັງເຂົ້າຮ່ວມການປະຕິບັດງານ ແລະ ຂະບວນການປະເມີນຜົນ ເພື່ອພັດທະນາຄວາມສາມາດດ້ານວິຊາຊີບຢ່າງຕໍ່ເນື່ອງ;
   - ປະຕິບັດຕາມບົດແນະນຳທີ່ກ່ຽວຂ້ອງ, ກົດລະບຽບ ແລະ ກົດໝາຍ ທີ່ກ່ຽວພັນເຖິງການປະຕິບັດດ້ານການປິ່ນປົວຮັກສາ.

4. **ການຮັກສາສຸຂະພາບ ແລະ ສະຫວັດດີການ:**

1) ທັນຕະແພດ ຄວນເອົາໃຈໃສ່ຮັກສາສຸຂະພາບ ແລະ ສະຫວັດດີພາບຂອງຕົນ ດ້ວຍການປະຕິບັດດັ່ງນີ້:

– ຖືສຳຄັນການສັກຢາກັນພະຍາດ ໂດຍສະເພາະພະຍາດທີ່ພົບເລື້ອຍ ແລະ ສັກຢາກັນພະຍາດຕິດຕໍ່ທີ່ຮ້າຍແຮງໃນບ່ອນທີ່ມີເງື່ອນໄຂ;

– ປຶກສາທ່ານໝໍຜູ້ທີ່ມີຄຸນວຸດທິ ໂດຍບໍ່ຊັກຊ້າ ຖ້າທັນຕະແພດຄິດວ່າຕົນເອງຖືກຕິດເຊື້ອພະຍາດຕິດຕໍ່ທີ່ຮ້າຍແຮງ ແລະ ໝັ້ນໃຈວ່າ ສະພາບດັ່ງກ່າວ ຈະບໍ່ກໍ່ໃຫ້ເກີດຄວາມສ່ຽງຕໍ່ຄົນເຈັບ ແລະ ຜູ້ອື່ນໆ;

– ພະຍາຍາມຮັກສາຄວາມສົມດຸນ ລະຫວ່າງວຽກງານ ແລະ ການດຳລົງຊີວິດ.

2) ທັນຕະແພດ ຄວນເອົາໃຈໃສ່ດູແລເບິ່ງແຍງສຸຂະພາບ ແລະ ສະຫວັດດີພາບຂອງເພື່ອນຮ່ວມງານ ດ້ວຍການປະຕິບັດດັ່ງນີ້:

– ຊ່ວຍເພື່ອນຮ່ວມງານ ຜູ້ທີ່ມີບັນຫາດ້ານສຸຂະພາບ ໃຫ້ໄດ້ຮັບການປິ່ນປົວຮັກສາຢ່າງເໝາະສົມ;

– ປະຕິບັດຕາມບົດແນະນຳ ຂອງກະຊວງສາທາລະນະສຸກ ສຳລັບທັນຕະແພດຜູ້ທີ່ມີບັນຫາດ້ານສຸຂະພາບ;

– ແຈ້ງຕໍ່ສະພາຄຸ້ມຄອງວິຊາຊີບປິ່ນປົວ ຖ້າທັນຕະແພດໄດ້ພົບເຫັນທັນຕະແພດຜູ້ອື່ນ ຂາດສະມັດຕະພາບໃນການປະຕິບັດວຽກງານ;

– ແຈ້ງຕໍ່ສະພາຄຸ້ມຄອງວິຊາຊີບປິ່ນປົວ ຖ້າທັນຕະແພດເຫັນການປິ່ນປົວ ຂອງທັນຕະແພດຜູ້ອື່ນທີ່ຂາດຄຸນນະພາບ ຫຼື ຂາດມາດຕະຖານວິຊາຊີບ.

5. **ດ້ານສາທາລະນະສຸກ**

ທັນຕະແພດຕ້ອງໄດ້ລາຍງານຕໍ່ກົມກ່ຽວຂ້ອງ ກ່ຽວກັບຂໍ້ມູນດັ່ງຕໍ່ໄປນີ້:

1) ພະຍາດຕິດຕໍ່ ແລະ ພະຍາດອື່ນ ທີ່ຕ້ອງລາຍງານ (ຕ້ອງແຈ້ງທັນທີທັນໃດເມື່ອພົບ ລວມທັງກໍລະນີທີ່ສົງໃສ);

2) ພະຍາດບໍ່ຕິດຕໍ່ ອີງຕາມຂໍ້ກຳນົດ ຂອງກະຊວງສາທາລະນະສຸກວາງອອກ.

## III. ຂອບເຂດການປະຕິບັດງານຂອງທັນຕະແພດ

ປະຕິບັດຕາມທັກສະ ແລະ ຄວາມຮູ້ຕາມທີ່ໄດ້ຝຶກອົບຮົມຕົວຈິງ, ຊຶ່ງໄດ້ລະບຸໄວ້ ໃນຂອບເຂດຂອງການປະຕິບັດຂອງທັນຕະແພດ. ຕະຫລອດໄລຍະຂອງການໃຫ້ການບໍລິການທາງການແພດ ແລະ ທັນຕະກຳ, ທັນຕະແພດຕ້ອງປະຕິບັດ ດັ່ງນີ້:

1. ຕິດໃຫ້ເຫັນ ສຳເນົາວຸດທິບັດ ທີ່ຢັ້ງຢືນເຖິງວິຊາທີ່ໄດ້ຮຽນມາ;
2. ໃຊ້ວຸດທິຂອງຂະແໜງວິຊາ ທີ່ໄດ້ຂຶ້ນທະບຽນນຳສະພາຄຸ້ມຄອງວິຊາຊີບປິ່ນປົວເທົ່ານັ້ນ.
   (ລະອຽດເບິ່ງນຳເອກະສານຂອບເຂດການປະຕິບັດງານຂອງທັນຕະແພດ)

## IV. ຈັນຍາທຳ, ສັດຊື່ບໍລິສຸດ ແລະ ຄວາມເປັນມືອາຊີບ

1. **ຂອບເຂດດ້ານວິຊາຊີບ**

1) ທັນຕະແພດ ຕ້ອງຍົກສູງຫຼັກການດ້ານຈັນຍາບັນ ແລະ ມາດຕະຖານ ດ້ານການປະພຶດ;

2) ໃນການປະຕິບັດວຽກງານ ຕາມຂອບເຂດວິຊາຊີບຂອງຕົນ, ທັນຕະແພດ ຄວນເອົາໃຈໃສ່ດັ່ງນີ້:

- ບໍ່ສວຍໃຊ້ຖານະຕຳແໜ່ງຂອງຕົນ ເພື່ອຫາຜົນໂຫຍດຈາກຄົນເຈັບ, ບໍ່ລ່ວງລະເມີດທາງເພດ ຫລື ບໍ່ປະຕິບັດ ໃນສິ່ງທີ່ບໍ່ຄວນ ຫລື ບໍ່ເໝາະສົມກັບຄົນເຈັບ;
- ຄວນມຸ້ງເນັ້ນຕໍ່ການໃຫ້ການບໍລິການທີ່ດີ ດ້ວຍການໃຫ້ການປິ່ນປົວ ແລະ ຄຳແນະນຳທີ່ເຂົ້າກັບບັນຫາ ຫລື ມະຕິພະຍາດຂອງຄົນເຈັບ ໂດຍມີຂໍ້ມູນອ້າງອີງທີ່ຊັດເຈນ.

2. **ການລາຍງານທາງການແພດ ແລະ ທັນຕະກຳ**

ທັນຕະແພດ ເມື່ອໄດ້ຮັບຄວາມໄວ້ເນື້ອເຊື່ອໃຈ ຈາກການຈັດຕັ້ງທີ່ກ່ຽວຂ້ອງທີ່ໄດ້ມອບໝາຍໃຫ້ເຊັນເອກະສານຕ່າງໆ ເຊັ່ນ: ໃບຢັ້ງຢືນການຕາຍ, ໃບຢັ້ງຢືນພະຍາດ ໂດຍຖືວ່າລາຍເຊັນນັ້ນ ໄດ້ອີງໃສ່ຂໍ້ມູນທີ່ເປັນຄວາມຈິງ. ເພື່ອຈະຮັກສາ ຄວາມໄວ້ເນື້ອເຊື່ອໃຈດັ່ງກ່າວ ທັນຕະແພດຕ້ອງປະຕິບັດດັ່ງນີ້:

1) ຕ້ອງກວດຄືນຂໍ້ມູນຕ່າງໆກ່ອນເຊັນເອກະສານ ແລະ ເຊັນເອກະສານທີ່ຖືກຕ້ອງຊັດເຈນເທົ່ານັ້ນ;
2) ຖ້າຫາກຖືກຮ້ອງຂໍໃຫ້ສະໜອງຫລັກຖານ ຫລື ໃຫ້ເປັນພະຍານໃນຄະດີ ຫລື ການສອບສວນທີ່ເປັນທາງການ ຕ້ອງສັດຊື່ ທັງໃນວາຈາ ແລະ ລາຍລັກອັກສອນ, ແລະ ຮັບປະກັນການນຳສະເໜີ ຕາມຂອບເຂດຄວາມຮູ້ຄວາມສາມາດຂອງຕົນເອງ;
3) ບໍ່ຄວນອອກໃບຢັ້ງຢືນພະຍາດ ໃນເມື່ອບໍ່ມີຫລັກຖານພຽງພໍວ່າມີຄວາມພິການ.

3. **ການຈັດການດ້ານການເງິນ ແລະ ການຄ້າ , ທັນຕະແພດ ຄວນເອົາໃຈໃສ່ດັ່ງນີ້:**

1) ເປັນຄົນສັດຊື່ ແລະ ໂປ່ງໃສ ໃນທຸກການຈັດແຈງເລື່ອງການເງິນກັບຄົນເຈັບ ແລະ ບ່ອນທີ່ຄົນເຈັບມີຜົນປະໂຫຍດທາງດ້ານການເງິນ;
2) ຫລີກເວັ້ນການຊຸກຍູ້ຄົນເຈັບໃນການໃຫ້ເງິນ, ການກູ້ຢືມເງິນ ແລະ ໃຫ້ຂອງຂວັນ, ໃຫ້ຢືມ ແລະ ຮັບເງິນ ຫລື ຂອງຂວັນທີ່ເປັນປະໂຫຍດທັງທາງກົງ ແລະ ທາງອ້ອມຕໍ່ຕົນເອງ ຊຶ່ງລວມທັງການມີສ່ວນໃນການກູ້ຢືມ ຫລື ການລົງທຶນກັບຄົນເຈັບ.
3) ຕ້ອງໃຫ້ຄວາມສະດວກແກ່ຄົນເຈັບ ໃນການເຂົ້າເຖິງເວດຊະພັນ ຕາມຄວາມຮຽກຮ້ອງຕ້ອງການ, ເວດຊະພັນດັ່ງກ່າວ ແມ່ນສິ່ງທີ່ສາມາດບໍລິໂພກ, ເຄື່ອງມື/ອຸປະກອນການແພດ ແລະ ທັນຕະກຳ ຫລື ເຄື່ອງໃຊ້ໄຟຟ້າດ້ານການແພດສຳລັບການບົ່ງມະຕິ, ປິ່ນປົວ, ບັນເທົາ ຫລື ປ້ອງກັນພະຍາດ ລວມທັງຄວາມຜິດປົກກະຕິ ຫລື ການບາດເຈັບຂອງຄົນເຈັບ.

4. **ການຂັດແຍ້ງດ້ານຜົນປະໂຫຍດ**

1) ທັນຕະແພດ ຄວນຫລີກລ້ຽງການຂັດແຍ້ງດ້ານຜົນປະໂຫຍດ ທີ່ຈະສົ່ງຜົນຕໍ່ການປິ່ນປົວຄົນເຈັບ. ຄວາມຂັດແຍ້ງດັ່ງກ່າວອາດເກີດຂຶ້ນ ເມື່ອທັນຕະແພດຜູ້ໃດຜູ້ໜຶ່ງໄດ້ຮັບຄວາມໄວ້ວາງໃຈໃນການປິ່ນປົວຄົນເຈັບ, ພ້ອມດຽວກັນນັ້ນກໍ່ມີທັງຜົນປະໂຫຍດດ້ານການເງິນ, ດ້ານວິຊາຊີບ ຫລື ຜົນປະໂຫຍດສ່ວນຕົວ ຫລື ມີການກ່ຽວພັນກັບບຸກຄົນທີ 3 ຊຶ່ງທັງໝົດອາດສົ່ງຜົນຕໍ່ການປິ່ນປົວຄົນເຈັບ;
2) ທັນຕະແພດຄວນປະຕິບັດດັ່ງນີ້:
   - ປະຕິບັດຕົນເພື່ອຜົນປະໂຫຍດສູງສຸດຂອງຄົນເຈັບ ໃນເວລາໃຫ້ການປິ່ນປົວ, ໃຫ້ການປົວລະບັດຄົນເຈັບ ແລະ ໃນເວລານຳສົ່ງຄົນເຈັບ;

- ມີສະຕິສູງຕໍ່ຄວາມຂັດແຍ້ງທາງຜົນປະໂຫຍດທີ່ພົວພັນເຖິງການສັ່ງຢາ, ການສັ່ງກວດເພື່ອບົ່ງມະຕິ ແລະ ການນຳໃຊ້ເຄື່ອງມືທາງການແພດ;
- ຫລີກລ້ຽງການຮັບເອົາສິ່ງຈູງໃຈ, ຂອງຂວັນ, ການຕ້ອນຮັບ ຊຶ່ງອາດມີຜົນຕໍ່ການປ່ຽນແປງທິດທາງໃນການສັ່ງຢາ, ການປິ່ນປົວ ຫລື ການນຳສົ່ງຄົນເຈັບ.

5. **ການສັ່ງຢາ, ທັນຕະແພດຄວນປະຕິບັດດັ່ງນີ້:**
   1) ປະຕິບັດຕາມຄູ່ມືແນະນຳໃນການໃຊ້ຢາ;
   2) ສັ່ງຢາປິ່ນປົວທີ່ປອດໄພ ແລະ ມີປະສິດທິພາບ ໂດຍອີງໃສ່ຫລັກຖານດ້ານວິທະຍາສາດທີ່ມີຢູ່;
   3) ຮັບປະກັນການສັ່ງຢາ ທີ່ເຮັດໃຫ້ເພສັຊກອນ ສາມາດຈ່າຍຢາສາມັນ ທີ່ມີປະສິດທິພາບເທົ່າທຽມກັນກັບຢາທີ່ມີຍີ່ຫໍ້ ແຕ່ລາຄາຖືກກວ່າ.

6. **ການສັ່ງຢາປິ່ນປົວຕົນເອງ, ປິ່ນປົວສະມາຊິກໃນຄອບຄົວ ແລະ ພີ່ນ້ອງໃກ້ຊິດ**
   1) ທັນຕະແພດ ບໍ່ຄວນເປັນຜູ່ປິ່ນປົວຕົ້ນຕໍ ຫລື ເປັນຜູ່ປິ່ນປົວປະຈຳຄົນໃນຄອບຄົວຂອງຕົນເອງ ເພາະໃນເວລານັ້ນ ຄວາມເປັນມືອາຊີບອາດຫລຸດລົງ, ຍົກເວັ້ນກໍລະນີການປິ່ນປົວແບບປະຈຳວັນ, ໄລຍະສັ້ນ, ກໍລະນີສຸກເສີນທີ່ເບົາບາງ ຫລື ຢູ່ໃນສະພາບໂດດດ່ຽວ;
   2) ໃນກໍລະນີສຸກເສີນ ຫລື ໃນສະພາບໂດດດ່ຽວບ່ອນບໍ່ມີທັນຕະແພດທີ່ມີວຸດທິພຽງພໍ ທັນຕະແພດສາມາດປິ່ນປົວຕົນເອງ ຫລື ຄົນໃນຄອບຄົວໄດ້ ຈົນກວ່າຈະມີທັນຕະແພດຜູ່ອື່ນມາຊ່ວຍ;
   3) ຈະເປັນການບໍ່ເໝາະສົມສຳລັບທັນຕະແພດ ທີ່ຈະຂຽນໃບສັ່ງຢາໃນບັນຊີຢາຄວບຄຸມໃຫ້ແກ່ຕົນເອງ ຫລື ຄົນໃນຄອບຄົວ ຍົກເວັ້ນກໍລະນີສຸກເສີນ.

7. **ການຄົ້ນຄ້ວາ**

ທັນຕະແພດ ສາມາດເຮັດການຄົ້ນຄ້ວາກ່ຽວກັບມະນຸດໄດ້ ເພື່ອປັບປຸງການປິ່ນປົວ ແລະ ຄຸນນະພາບຊີວິດຂອງຊຸມຊົນ. ເມື່ອເຮັດການຄົ້ນຄວ້າ, ທັນຕະແພດຕ້ອງປະຕິບັດຕາມບົດແນະນຳ ກ່ຽວກັບຈັນຍາທຳໃນການຄົ້ນຄວ້າ; ໃນເວລາເຮັດການຄົ້ນຄວ້າທັນຕະແພດຄວນ:

   1) ປະຕິບັດຕໍ່ຜູ້ເຂົ້າຮ່ວມດ້ວຍຄວາມເຄົາລົບ;
   2) ປະຕິບັດຕົນດ້ວຍຄວາມສັດຊື່ບໍລິສຸດ ແລະ ມີສິນທຳ;
   3) ການເຂົ້າຮ່ວມຕ້ອງເປັນໄປດ້ວຍຄວາມສະໝັກໃຈ ແລະ ອີງຕາມການຍິນຍອມຫລັງຈາກໄດ້ຮັບຮູ້ຂໍ້ມູນແລ້ວ;
   4) ຕິດຕາມຄວາມຄືບໜ້າຂອງການຄົ້ນຄ້ວາ ແລະ ແຈ້ງທັນທີຕໍ່ທາງການກ່ຽວກັບເຫດການ ຫລື ຜົນຮ້າຍທີ່ເກີດຂຶ້ນ;
   5) ອະນຸຍາດໃຫ້ຜູ້ເຂົ້າຮ່ວມ ຖອນໂຕອອກຈາກການຄົ້ນຄົ້ວາໄດ້ທຸກເວລາ ໂດຍບໍ່ຕ້ອງຖາມເຖິງເຫດຜົນ;
   6) ຮັກສາຄວາມລັບຂອງຜູ້ເຂົ້າຮ່ວມ;
   7) ປະຕິບັດຕາມບົດແນະນຳກ່ຽວກັບການຕີພິມຜົນການຄົ້ນຄວ້າ, ລິຂະສິດຜູ້ແຕ່ງ ແລະ ການທົບທວນຄືນຂອງໝູ່ຄະນະດ້ວຍກັນ.

## V. ການພົວພັນກັບຄົນເຈັບ

1. **ການຮັກສາຄວາມລັບຂອງຄົນເຈັບ**

   1) ທັນຕະແພດ ຕ້ອງຮັກສາຄວາມລັບ ເຖິງແມ່ນວ່າຄົນເຈັບເສຍຊີວິດແລ້ວກໍຕາມ, ເວັ້ນເສຍແຕ່ຖືກຮຽກຮ້ອງທາງດ້ານກົດໝາຍ, ຜົນປະໂຫຍດສ່ວນລວມ ແລະ ຕາມຄວາມຍິນຍອມຂອງຄົນເຈັບ;

   2) ທັນຕະແພດ ບໍ່ຕ້ອງເປີດເຜີຍຄວາມລັບຂອງຄົນເຈັບໃຫ້ແກ່ຜູ້ໃດໝົດ ແມ່ນແຕ່ຄູ່ສົມລົດ, ລູກຂອງຄົນເຈັບເອງ, ພີ່ນ້ອງຮ່ວມອຸທອນ, ຄົນໃນຄອບຄົວດຽວກັນ ຫລື ບຸກຄົນອື່ນ ໂດຍປາສະຈາກຄວາມຍິນຍອມຂອງຄົນເຈັບ;

   3) ຜູ້ທີ່ບໍ່ທັນບັນລຸນິຕິພາວະ ແລະ ຜູ້ອື່ນໆ ຕ້ອງໄດ້ຮັບຄຳເຫັນດີຈາກຜູ້ປົກຄອງ ຫລື ບຸກຄົນທີ່ມີອຳນາດຕາມກົດໝາຍເພື່ອຕັດສິນໃນກໍລະນີທີ່ຈຳເປັນຕ້ອງລາຍງານ.

2. **ການເປີດເຜີຍບົດບັນທຶກຄົນເຈັບ, ທັນຕະແພດມີໜ້າທີ່ດັ່ງນີ້ :**

   1) ມີໜ້າທີ່ຮັກສາບົດບັນທຶກຄົນເຈັບໄວ້ໃຫ້ດີ ແລະ ທັນກັບສະພາບຢູ່ສະເໝີ;

   2) ຄວນບັນທຶກຜົນການກວດຄົນເຈັບແຕ່ລະຄັ້ງ ໃສ່ແບບຟອມມາດຕະຖານ. ບົດບັນທຶກດັ່ງກ່າວເປັນເອກະສານລັບ ທີ່ໃຫ້ຮູ້ໄດ້ສະເພາະຄົນເຈັບ ແລະ ທັນຕະແພດເທົ່ານັ້ນ ແລະ ບໍ່ຄວນເປີດເຜີຍຕໍ່ບຸກຄົນທີ 3 ກ່ອນໄດ້ຮັບການຍິນຍອມທີ່ເປັນລາຍລັກອັກສອນຈາກຄົນເຈັບ, ຍົກເວັ້ນກໍລະນີຖືກຮຽກຮ້ອງທາງດ້ານກົດໝາຍ ຫລື ເພື່ອຮັກສາສະຫວັດດີພາບຂອງບຸກຄົນ ແລະ ຊຸມຊົນ;

   3) ຖ້າຄົນເຈັບຮ້ອງຂໍບົດບັນທຶກທາງການແພດເປັນລາຍລັກອັກສອນ ທັນຕະແພດຕ້ອງອອກບົດສຳເນົາໃຫ້ຄົນເຈັບ ຫລື ທັນຕະແພດຜູ້ອື່ນ ຫລື ທະນາຍຄວາມ ຫລື ບຸກຄົນອື່ນທີ່ຖືກລະບຸຈາກຄົນເຈັບ.

3. **ການຍິນຍອມ**

   1) ກ່ອນຈະປະຕິບັດຫັດຖະການຕ່າງໆ ທັນຕະແພດຕ້ອງໄດ້ຮັບຄຳຍິນຍອມຈາກຄົນເຈັບ ແລະ ຕ້ອງໄດ້ອະທິບາຍຂໍ້ມູນຢ່າງລະອຽດ ເພື່ອໃຫ້ຄົນເຈັບເຂົ້າໃຈແຈ້ງ ພ້ອມດຽວກັນນັ້ນທັນຕະແພດຕ້ອງແຈ້ງຂໍ້ມູນກ່ຽວກັບຄວາມສ່ຽງຕໍ່ສຸຂະພາບ, ຜົນປະໂຫຍດຂອງຫັດຖະການດັ່ງກ່າວ, ຄ່າບໍລິການ ແລະ ຄ່າໃຊ້ຈ່າຍຕ່າງໆທີ່ກ່ຽວຂ້ອງ;

   2) ທັນຕະແພດ ຄວນໃຫ້ໂອກາດແກ່ຄົນເຈັບໃນການຮັບຮູ້ຂໍ້ມູນຢ່າງຈະແຈ້ງກ່ອນຈະລົງມືປິ່ນປົວ;

   3) ທັນຕະແພດ ຕ້ອງໄດ້ຮັບຄວາມຍິນຍອມທີ່ເປັນລາຍລັກອັກສອນ ກ່ອນຈະປະຕິບັດຫັດຖະການດ້ານສັນລະຍະສາດ ຫລື ຫັດຖະການໃດໜຶ່ງທີ່ກະທຳພາຍໃຕ້ການວາງຢາສະ ຫລັບ;

   4) ຖ້າຄົນເຈັບບໍ່ຢູ່ໃນສະພາບທີ່ໃຫ້ຄວາມຍິນຍອມໄດ້, ທັນຕະແພດຕ້ອງພະຍາຍາມ ຕິດຕໍ່ຫາຜູ້ປົກຄອງ ຫລື ບຸກຄົນທີ່ມີອຳນາດຕາມກົດໝາຍ ໃນການເປັນຕົວແທນໃຫ້ຄຳຍິນຍອມ, ໃນກໍລະນີທີ່ບໍ່ສາມາດໄດ້ຮັບຄຳຍິນຍອມ, ທັນຕະແພດຕ້ອງໃຫ້ການປິ່ນປົວໂລດຖ້າມີຄວາມຈຳເປັນເພື່ອຊ່ວຍຊີວິດ ຫລື ເພື່ອຫລີກເວັ້ນການຊຸດໜັກລົງຂອງສຸຂະພາບ.

4. **ການຈັດການກ່ຽວກັບການຮ້ອງທຸກ**

   1) ທັນຕະແພດ ຄວນຮັບຮູ້ສິດທິຂອງຄົນເຈັບ ໃນການຮ້ອງທຸກເຖິງຄະນະບໍລິຫານງານຄຸ້ມຄອງວິຊາຊີບປິ່ນປົວສະເພາະທັນຕະແພດ ຂອງສະພາຄຸ້ມຄອງຄຸ້ມຄອງວິຊາຊີບປິ່ນປົວ ແລະ ຮ່ວມມືກັບຄົນເຈັບແກ້ໄຂບັນຫາດັ່ງກ່າວຖ້າເປັນໄປໄດ້;

2) ຄົນເຈັບມີສິດທີ່ຈະຮ້ອງທຸກກ່ຽວກັບການປິ່ນປົວຖ້າບໍ່ພໍໃຈ, ທັນຕະແພດຕ້ອງປະຕິບັດຕາມກົດໝາຍ ແລະ ນະໂຍບາຍທີ່ກ່ຽວຂ້ອງ ແຕ່ຮັບປະກັນການຮ້ອງທຸກນັ້ນ ຈະບໍ່ມີຜົນສະທ້ອນຕໍ່ການປິ່ນປົວ.

5. ການປິ່ນປົວບົວລະບັດໄລຍະສຸດທ້າຍຂອງຊີວິດ

1) ທັນຕະແພດ ມີບົດບາດໃນການອະທິບາຍເພື່ອຊ່ວຍຈັດການກັບຄວາມເປັນຈິງກ່ຽວກັບຄວາມຕາຍ, ໃນການປິ່ນປົວບົວລະບັດໄລຍະສຸດທ້າຍຂອງຊີວິດ, ທັນຕະແພດຄວນປະຕິບັດດັ່ງນີ້:

- ຕອບສະໜອງ ຫລື ຈັດການຢ່າງເໝາະສົມກ່ຽວກັບການປິ່ນປົວແບບປະຄັບປະຄອງ;
- ອະທິບາຍໃຫ້ຄົນເຈັບ ຫລື ຍາດພີ່ນ້ອງ ຮູ້ເຖິງຂີດຈຳກັດດ້ານການແພດໃນການຈະຍືດຊີວິດ;
- ຮັບຮູ້ວ່າ ການຍືດຊີວິດອາດບໍ່ເປັນປະໂຫຍດແກ່ຄົນເຈັບ ແລະ ອາດຫລຸດຜ່ອນຄຸນນະພາບຊີວິດ;
- ຊຸກຍູ້ໃຫ້ຄົນເຈັບຂຽນເອກະສານລ່ວງໜ້າ ສະແດງເຈດຈຳນົງກ່ຽວກັບ ການປິ່ນປົວບົວລະບັດໃນບັ້ນທ້າຍຂອງຊີວິດ.

2) ທັນຕະແພດ ບໍ່ມີສິດທີ່ຈະຈົບຊີວິດຂອງຄົນເຈັບ, ໃນຂະນະດຽວກັນກໍ່ບໍ່ມີໜ້າທີ່ຈະຍືດຊີວິດ ບໍ່ວ່າກໍລະນີໃດກໍຕາມ, ທັນຕະແພດຄວນປຶກສາຫາລືກັບເພື່ອນຮ່ວມງານ ເມື່ອມີຄວາມເຫັນທີ່ແຕກຕ່າງກັນກ່ຽວກັບການຍືດຊີວິດ ຫລື ການສືບຕໍ່ປິ່ນປົວ. ທັນຕະແພດມີໜ້າທີ່ຊ່ວຍບັນເທົາສະພາບວິກິດການຂອງພະຍາດຕ່າງໆ, ສື່ສານກັບຄົນເຈັບ ແລະ ຄອບຄົວ ເພື່ອໃຫ້ເຂົ້າໃຈວ່າ ມີຜົນການປິ່ນປົວແບບໃດບໍ ທີ່ບໍ່ເໝາະສົມ.

## VI. ຄ່າໃຊ້ຈ່າຍ (ຄ່າທຳນຽມ, ຄ່າປິ່ນປົວ, ຄ່າບໍລິການ)

1. ການໃຫ້ຄຳແນະນຳລ່ວງໜ້າກ່ຽວກັບຄ່າໃຊ້ຈ່າຍ

1) ຄົນເຈັບມີສິດທີ່ຈະຮູ້ວ່າ ການບໍລິການທາງການແພດ ແລະ ທັນຕະກຳແຕ່ລະຢ່າງນັ້ນ ມີຄ່າໃຊ້ຈ່າຍເທົ່າໃດ, ພວກເຂົາເຈົ້າຕ້ອງຮູ້ລ່ວງໜ້າກ່ອນຈະຮັບການປິ່ນປົວໃດໜຶ່ງ, ທັນຕະແພດຕ້ອງແຈ້ງໃຫ້ຄົນເຈັບຮູ້ກ່ຽວກັບຄ່າໃຊ້ຈ່າຍຕ່າງໆກ່ອນຈະຮັບຄຳຍິນຍອມໃນການປິ່ນປົວ;

2) ທັນຕະແພດ ຄວນແຈ້ງຄ່າໃຊ້ຈ່າຍສຳຫລັບການບໍລິການທີ່ບໍ່ແມ່ນດ້ານຄລີນິກ (ເຊັ່ນຄ່າອັດເອກະສານກ່ຽວກັບການບັນທຶກທາງການແພດ) ແລະ ແຈ້ງໃຫ້ຄົນເຈັບຮູ້ກ່ຽວກັບຄ່າໃຊ້ຈ່າຍ ກ່ອນຈະໃຫ້ການບໍລິການປິ່ນປົວທີ່ບໍ່ມີປະກັນໄພ ຫລື ປະກັນສັງຄົມ;

3) ຢູ່ຫ້ອງກວດພະຍາດ ທັນຕະແພດຄວນຕິດລາຍການຫັດຖະການຕ່າງໆ ແລະ ລາຄາຄ່າໃຊ້ຈ່າຍ.

2. ຕາຕະລາງ ແລະ ນິຕິກຳກ່ຽວກັບຄ່າໃຊ້ຈ່າຍ

1) ທັນຕະແພດ ຕ້ອງຮູ້ຈັກກ່ຽວກັບຕາຕະລາງ ແລະ ນິຕິກຳກ່ຽວກັບຄ່າໃຊ້ຈ່າຍຢູ່ໃນພະແນກ ແລະ ຫ້ອງກວດພະຍາດຂອງຕົນ, ໃນກໍລະນີທີ່ບໍ່ມີຕະລາງຄ່າໃຊ້ຈ່າຍ ທັນຕະແພດຄວນເກັບຄ່າໃຊ້ຈ່າຍຢ່າງສົມເຫດສົມຜົນ ຫລື ແລ້ວແຕ່ລະທ້ອງຖິ່ນ , ທັນຕະແພດຕ້ອງປະຕິບັດດັ່ງນີ້:

- ສົ່ງເອກະສານ ເພື່ອຮຽກເກັບຄ່າໃຊ້ຈ່າຍຈາກບໍລິສັດປະກັນໄພ ຫລື ປະກັນສັງຄົມ ໃນນາມຂອງຄົນເຈັບທີ່ມີປະກັນໄພ ແລະ ເກັບເງິນຕາມຕາຕະລາງຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ;
- ປະຕິບັດຕາມກົດລະບຽບ ຂອງການຮຽກເກັບຄ່າໃຊ້ຈ່າຍຈາກບໍລິສັດປະກັນໄພ ແລະ/ຫລື ປະກັນສັງຄົມ ແລະ ໃຊ້ລະຫັດຢ່າງຖືກຕ້ອງສຳລັບການບົ່ງມະຕິ ແລະ ລະຫັດຂອງຫັດຖະການທີ່ກ່ຽວຂ້ອງ;

- ຫ້າມສົ່ງເອກະສານເກັບເງິນຫລາຍເທື່ອ ຫລື ຂຽນໃບເກັບເງິນສອງຄັ້ງ ໃນຫັດຖະການອັນດຽວກັນ;
- ຫ້າມເກັບເງິນ ຫລື ເກັບຄ່າໃຊ້ຈ່າຍທີ່ບໍ່ຖືກຕ້ອງຕາມກົດໝາຍກຳນົດ;
- ເກັບຄ່າໃຊ້ຈ່າຍທາງການແພດ ແລະ ທັນຕະກຳ ທີ່ບໍ່ມີປະກັນໄພ ຫລື ປະກັນສັງຄົມ.

2) ໃນກໍລະນີສຸກເສີນ ຖ້າຫາກວ່າຄົນເຈັບບໍ່ມີປະກັນໄພ ແລະ/ຫລື ປະກັນສັງຄົມ ທັນຕະແພດຕ້ອງໃຫ້ການບໍລິການປິ່ນປົວໂດຍບໍ່ຫລຸດຜ່ອນຄຸນນະພາບຂອງການບໍລິການທາງການແພດ ແລະ ທັນຕະກຳ.

## VII. ການໂຄສະນາເພື່ອສົ່ງເສີມການບໍລິການ

ທັນຕະແພດຕ້ອງຮັບຜິດຊອບຕໍ່ເນື້ອໃນໂຄສະນາກ່ຽວກັບການບໍລິການຂອງຕົນເອງ, ໃນການໂຄສະນາທັນຕະແພດຕ້ອງປະຕິບັດດັ່ງນີ້:

- ໂຄສະນາຕາມຄວາມເປັນຈິງ ແລະ ຂໍ້ມູນທີ່ກວດສອບໄດ້ກ່ຽວກັບການບໍລິການທາງການແພດ ແລະ ທາງທັນຕະກຳ, ຂອບເຂດການປະຕິບັດງານ ແລະ ປະກາສະນີຍະບັດ;
- ຫລີກເວັ້ນການໃຊ້ ຫລື ການໂຄສະນາສົ່ງເສີມການປິ່ນປົວ ຫລື ຫັດຖະການທີ່ບໍ່ມີຫລັກຖານອ້າງອີງ ແລະ ການປິ່ນປົວທີ່ຍັງຢູ່ໃນໄລຍະຄົ້ນຄວ້າ;
- ໃຫ້ຂໍ້ມູນທີ່ທ່ຽງຕົງ ໂດຍບໍ່ສົມທຽບການບໍລິການຂອງຕົນກັບທັນຕະແພດຜູ້ອື່ນ;
- ຫລີກເວັ້ນການໂຄສະນາທີ່ຮັບປະກັນວ່າຈະຫາຍຂາດ, ຍົກຄວາມຄາດຫວັງທີ່ບໍ່ອາດເປັນຈິງ ຫລື ການກ່າວອວດອ້າງສັບພະຄຸນຂອງສິນຄ້າ ຫລື ການບໍລິການໃດໜຶ່ງ.

## VIII. ການສົ່ງຕໍ່ຄົນເຈັບເພື່ອ ການປຶກສາຫາລື ແລະ ນຳສົ່ງເພື່ອການປິ່ນປົວ

1. ທັນຕະແພດ ຄວນສ້າງການພົວພັນທີ່ມີຄວາມນັບຖືຊຶ່ງກັນ ແລະ ກັນລະຫວ່າງເພື່ອນຮ່ວມງານ, ພະຍາບານ ແລະ ນັກວິຊາຊີບດ້ານສຸຂະພາບອື່ນໆ. ເມື່ອເຮັດວຽກໃນຖານະເປັນສ່ວນນຶ່ງຂອງໜ່ວຍງານ ຫລື ໃນກໍລະນີສົມທົບກັບເພື່ອນຮ່ວມງານທາງການແພດ ທັນຕະແພດຄວນປະຕິບັດດັ່ງນີ້:
   1) ສື່ສານກັບເພື່ອນຮ່ວມງານ ກ່ຽວກັບການປິ່ນປົວຄົນເຈັບຢ່າງຈະແຈ້ງ, ທັນການ, ມີປະສິດທິພາບ ແລະ ໃນແບບທີ່ນັບຖືກັນ;
   2) ຫລີກເວັ້ນການຂົ່ມເຫັງ, ການລ່ວງລະເມີດ ຫລື ການຈຳແນກຕໍ່ເພື່ອນຮ່ວມງານ;
   3) ບັນທຶກໃສ່ເອກະສານຢ່າງຄົບຖ້ວນ ກ່ຽວກັບການປິ່ນປົວຄົນເຈັບ ແລະ ໃຊ້ຂໍ້ມູນນີ້ເພື່ອຈຸດປະສົງໃນການສົ່ງຕໍ່ຄົນເຈັບ ເພື່ອການປິ່ນປົວຕາມຄວາມເໝາະສົມ.
2. ທັນຕະແພດຕ້ອງສົ່ງຕໍ່ ຫລື ນຳສົ່ງຄົນເຈັບຫາທັນຕະແພດຜູ້ອື່ນ ຫລື ນັກວິຊາຊີບດ້ານສຸຂະພາບອື່ນ ເມື່ອມີຄວາມຈຳເປັນ, ໂດຍທົ່ວໄປແລ້ວແມ່ນໃນກໍລະນີທີ່ໄລຍະເວລາຂອງການປິ່ນປົວທີ່ໄດ້ຖືກກຳນົດໄວ້ແລ້ວ. ໃນເວລາທີ່ສົ່ງຄົນເຈັບເພື່ອການປິ່ນປົວເພີ່ມເຕີມ, ທັນຕະແພດຄວນປະຕິບັດດັ່ງນີ້:
   1) ຮູ້ຈັກຂໍ້ຈຳກັດຂອງຕົນເອງ ແລະຮັບຮູ້ ຄວາມຊ່ຽວຊານສະເພາະຂອງເພື່ອນຮ່ວມງານທີ່ຈະສາມາດຊ່ວຍໄດ້;
   2) ກຳໄດ້ວຸດທິ, ປະສົບການ ແລະ ຄວາມຮູ້ຄວາມສາມາດຂອງທັນຕະແພດ ຜູ້ທີ່ເຮົາສົ່ງຄົນເຈັບໃຫ້;

3) ອະທິບາຍໃຫ້ຄົນເຈັບກ່ຽວກັບເຫດຜົນຂອງການສົ່ງຕໍ່ ຫລື ການນໍາສົ່ງ;
4) ຕົກລົງກັບຄົນເຈັບ ກ່ຽວກັບການເລືອກທັນຕະແພດທີ່ປຶກສາ ຫລື ທັນຕະແພດທີ່ຈະຮັບຜິດຊອບຫລັກໃນການປິ່ນປົວ;
5) ບັນທຶກໃສ່ເອກະສານຂອງຄົນເຈັບຢ່າງເປັນລາຍລັກອັກສອນ ກ່ຽວກັບຄວາມບໍ່ເຫັນດີຂອງຄົນເຈັບໃນການປຶກສາດ້ານສຸຂະພາບ ແລະ ສິ່ງທີ່ກ່ຽວຂ້ອງຕ່າງໆ;
6) ແຈ້ງໃຫ້ທັນຕະແພດທີ່ຈະຮັບຄົນເຈັບ ໃຫ້ຮູ້ກ່ຽວກັບປະຫວັດພະຍາດຂອງຄົນເຈັບ, ຜົນຂອງການກວດເພີ່ມ ແລະ ສະພາບການເຈັບເປັນໃນປັດຈຸບັນຂອງຄົນເຈັບ.

3. ທັນຕະແພດຊ່ຽວຊານຄວນໄດ້ຮັບເອກະສານນໍາສົ່ງຈາກທັນຕະແພດທົ່ວໄປ ເພື່ອຈະໃຫ້ການປິ່ນປົວແກ່ຄົນເຈັບ;
4. ທັນຕະແພດຊ່ຽວຊານ ຄວນແຈ້ງຄືນໃຫ້ທັນຕະແພດທີ່ສົ່ງຄົນເຈັບມານັ້ນ ໃຫ້ຮັບຊາບກ່ຽວກັບຜົນການປິ່ນປົວຂອງຕົນ ໂດຍຂຽນເປັນບົດລາຍງານການປິ່ນປົວດັ່ງກ່າວ. ໃນເມື່ອທັນຕະແພດທົ່ວໄປບໍ່ຢູ່ ທັນຕະແພດຊ່ຽວຊານມີຄວາມຮັບຜິດຊອບໃນການໃຫ້ ແລະ ການຈັດແຈງທຸກການບົວລະບັດທີ່ຈໍາເປັນຫລັງການປິ່ນປົວ.

## IX. ການມອບວຽກງານ

1. ເມື່ອພັກການ (ວັນພັກ/ຂາດວຽກຍ້ອນການເຈັບເປັນ/ໄປຝຶກອົບຮົມ/ໄປປະຊຸມ), ທັນຕະແພດ ຄວນມີການຈັດການທີ່ເໝາະສົມສໍາລັບການປິ່ນປົວຄົນເຈັບ ການມອບວຽກຄວນຂຽນລາຍລະອຽດຂອງໜ້າວຽກທີ່ຕ້ອງປະຕິບັດຕໍ່ຄົນເຈັບ, ເພື່ອໃຫ້ການມອບວຽກມີປະສິດທິພາບນັ້ນ ຕ້ອງແຈ້ງໃຫ້ເພື່ອນຮ່ວມງານຢ່າງຈະແຈ້ງກ່ຽວກັບຄວາມຕ້ອງການຂອງຄົນເຈັບ, ໃນເມື່ອມອບວຽກທັນຕະແພດຄວນປະຕິບັດດັ່ງນີ້:
   1) ຮັບປະກັນວ່າບຸກຄົນທີ່ຖືກມອບວຽກໃຫ້ນັ້ນມີວຸດທິການສຶກສາ, ຄວາມຮູ້, ທັກສະ ແລະ ຄວາມຮັບຜິດຊອບ ເພື່ອຈະໃຫ້ການປິ່ນປົວໄດ້ຕາມທີ່ຕ້ອງການ;
   2) ພົວພັນຕື່ມກັບທັນຕະແພດຜູ້ທີ່ມາແທນນັ້ນກ່ຽວກັບການປະຕິບັດວຽກຂອງລາວ ແລະການປິ່ນປົວຄົນເຈັບ.
2. ຈະບໍ່ຮັບຜິດຊອບ ຫລື ໃຫ້ຄໍາຊີ້ແຈງກ່ຽວກັບການຕັດສິນໃຈ ແລະ ການກະທໍາຂອງທັນຕະແພດທີ່ມາເຮັດວຽກແທນ. ເຖິງຢ່າງໃດກໍຕາມ ທັນຕະແພດປະຈໍາຄົນເຈັບຍັງມີຄວາມຮັບຜິດຊອບ ຕໍ່ການຄຸ້ມຄອງຄົນເຈັບຕໍ່ໄປຢູ່ ແລະ ສາມາດຊີ້ແຈງໄດ້ເຖິງການຕັດສິນໃຈ ໃນການມອບວຽກດັ່ງນີ້.

## X. ການກວດກາຈາກພາຍໃນ ແລະ ພາຍນອກ ເພື່ອພັດທະນາຄຸນນະພາບຂອງການປິ່ນປົວ

ເພື່ອພັດທະນາຄຸນນະພາບຂອງການປິ່ນປົວ ມີຄວາມຈໍາເປັນຢ່າງຍິ່ງທີ່ທັນຕະແພດທຸກຄົນຕ້ອງ:

1. ໄດ້ຮັບການກວດກາ, ການປະເມີນຜົນການປະຕິບັດງານ ແລະ ຄຸນນະພາບຂອງການປິ່ນປົວຈາກພາຍໃນ ແລະ ພາຍນອກ;
2. ມີການປະເມີນຕົນເອງ ມີຄວາມຄິດຢ່າງສ້າງສັນ ແລະ ຮຽນຮູ້ດ້ວຍຕົນເອງເພື່ອຮັກສາໄວ້ເຊິ່ງຄວາມສາມາດ ແລະ ຂີດຄວາມສາມາດໃນການປິ່ນປົວຄົນເຈັບ;

3. ໃຫ້ການປິ່ນປົວທີ່ມີຄຸນນະພາບ ໂດຍເນັ້ນໃສ່ເຫດຜົນ ຫລື ຫຼັກຖານທີ່ມີຢູ່ ແລະ ຂໍ້ແນະນຳຂອງຄະນະບໍລິຫານງານວິຊາຊີບປິ່ນປົວສະເພາະທັນຕະແພດ ສະພາຄຸ້ມຄອງວິຊາຊີບປິ່ນປົວ ກະຊວງສາທາລະນະສຸກ;
4. ພັດທະນາຄວາມຮູ້, ຄວາມສາມາດ ແລະ ທັກສະທາງດ້ານວິຊາຊີບຂອງຕົນເອງຕະຫລອດຊີວິດ.

## XI. ຂະບວນການກວດກັ່ນຕອງສຸຂະພາບ, ການຄຸ້ມຄອງຜູ່ປະຕິບັດງານ ແລະ ສະຖານທີ່ປະຕິບັດງານທາງທັນຕະກຳ

ທັນຕະແພດຄວນປະຕິບັດດັ່ງນີ້:

1. ມີສຸຂະພາບສົມບູນດີ ປາສະຈາກພະຍາດຕິດຕໍ່ ແລະ ຊຳເຮື້ອ;
2. ກວດສຸຂະພາບປະຈຳທຸກໆປີ ແລະ ສັກຢາກັນພະຍາດ;
3. ປ້ອງກັນຄົນເຈັບ, ເພື່ອນມິດ, ຍາດພີ່ນ້ອງ ໃຫ້ມີຄວາມປອດໄພ ຈາກຄວາມສ່ຽງທີ່ເກີດຈາກສຸຂະພາບ ແລະ ຈາກການປະຕິບັດງານຂອງທັນຕະແພດ;
4. ຢຸດຕິການບົ່ງມະຕິໃຫ້ຕົນເອງ, ການປະເມີນສຸຂະພາບຕົນເອງ ແລະ ໃຫ້ຢາແກ່ຕົນເອງ;
5. ຮ້ອງຂໍການຊ່ວຍເຫລືອທັນທີ, ແຈ້ງໃຫ້ອົງການທີ່ຕົນສັງກັດ ຖ້າມີຄວາມຜິດປົກກະຕິ ຫລື ຄວາມພິການເກີດຂຶ້ນແກ່ຕົນເອງ ທີ່ເປັນຜົນສະທ້ອນຕໍ່ວຽກງານ (ລວມທັງຕິດສິ່ງມຶນເມົາ ຫລື ເສບຕິດ);
6. ໃຊ້ວິທີການກະທຳ ຫລື ການປິ່ນປົວທີ່ເໝາະສົມໃນເມື່ອສົງໃສວ່າ ຄົນເຈັບທີ່ເປັນເດັກນ້ອຍຕິດສິ່ງເສບຕິດ ຫລື ເດັກທີ່ຂາດການດູແລ;
7. ມີສະຖານທີ່ ທີ່ເໝາະສົມແກ່ການປະກອບວິຊາຊີບປິ່ນປົວ ແລະ ມີຄວາມປອດໄພ (ປອດໄພຈາກກຳມັນຖະພາບລັງສີ, ເຄມີ...), ຮັບການຈັດການແກ້ໄຂໃນກໍລະນີສຸກເສີນໄດ້ຢ່າງສະດວກ ແລະ ປິ່ນປົວຄົນເຈັບໃນສະຖານທີ່ເຮັດວຽກທີ່ສະອາດ, ສະພາບແວດລ້ອມດີ ແລະ ປອດໄພ;
8. ປະຕິບັດຕາມປຶ້ມຄູ່ມືກ່ຽວກັບຄວາມປອດໄພຈາກກຳມັນຖະພາບລັງສີ ແລະ ການຄວບຄຸມການແຜ່ເຊື້ອ;
9. ຮັກສາເອກະສານໃຫ້ເປັນລະບຽບ, ຈະແຈ້ງ, ຄົບຖ້ວນ, ເປັນລະບົບ ແລະ ໃຫ້ສາມາດອ່ານໄດ້;
10. ເອກະສານທີ່ຕ້ອງໄດ້ນຳສົ່ງໄປຫາທັນຕະແພດຜູ່ອື່ນ ຫລື ພະນັກງານແພດຜູ່ອື່ນ ຕ້ອງໄດ້ຮັກສາຕົ້ນສະບັບໄວ້ໃນເອກະສານຄົນເຈັບ.

ນະຄອນຫຼວງວຽງຈັນ, ວັນທີ 02 ສິງຫາ 2019

**ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ**

ກະຊວງສາທາລະນະສຸກ
ສະພາຄຸ້ມຄອງວິຊາຊີບປິ່ນປົວ

ດຣ ປອນເມກ ດາລາລອຍ